ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 3091 /ສທ
ນະຄອນຫຼວງວຽງຈັນ, ວັນທີ 25 SEP 2024

# ຂໍ້ຕົກລົງ
# ວ່າດ້ວຍການນໍາເຂົ້າ - ສົ່ງອອກ, ແລະ ຜ່ານແດນອາຫານ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍອາຫານ (ສະບັບປັບປຸງ) ເລກທີ 33/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ສະບັບເລກທີ 570/ນຍ, ລົງວັນທີ 16 ກັນຍາ 2021;
- ອີງຕາມ ຄໍາສັ່ງວ່າດ້ວຍການອໍານວຍຄວາມສະດວກໃຫ້ແກ່ການນໍາເຂົ້າ-ສົ່ງອອກ, ການນໍາເຂົ້າຊົ່ວຄາວ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າຢູ່ ສປປ ລາວ, ສະບັບເລກທີ 12/ນຍ, ລົງວັນທີ 16 ຕຸລາ 2019;
- ອີງຕາມ ໜັງສືສະເໜີຂອງກົມອາຫານ ແລະ ຢາ, ສະບັບເລກທີ 6381/ກອຢ, ລົງວັນທີ 05 ກັນຍາ 2024.

## ລັດຖະມົນຕີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ (ປັບປຸງ)

ຂໍ້ຕົກລົງສະບັບນີ້ ກໍານົດຫຼັກການ, ລະບຽບການ, ວິທີການ ແລະ ມາດຕະການກ່ຽວກັບ ການຄຸ້ມຄອງ, ກວດກາ ແລະ ຕິດຕາມ ການນໍາເຂົ້າ, ສົ່ງອອກ, ນໍາເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນໍາເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນ ອາຫານ, ທາດເພີ່ມອາຫານ, ພາຊະນະບັນຈຸ ແລະ ຫຸ້ມຫໍ່ອາຫານ ເພື່ອຮັບປະກັນໃຫ້ອາຫານມີຄຸນນະພາບ, ປອດໄພ ແລະ ມີຄຸນຄ່າທາງດ້ານໂພຊະນາການ ແນໃສ່ປົກປ້ອງສຸຂະພາບຂອງຜູ້ບໍລິໂພກ, ທັງເປັນການອໍານວຍຄວາມສະດວກທາງດ້ານການຄ້າອາຫານ ແລະ ມີຄວາມຍຸດຕິທໍາ.

### ມາດຕາ 2 ການນໍາເຂົ້າ - ສົ່ງອອກ ແລະ ຜ່ານແດນອາຫານ (ປັບປຸງ)

ການນໍາເຂົ້າ - ສົ່ງອອກ ແລະ ຜ່ານແດນ ອາຫານ, ທາດເພີ່ມອາຫານ, ພາຊະນະບັນຈຸ ແລະ ຫຸ້ມຫໍ່ອາຫານ ລວມທັງການບໍລິຈາກອາຫານ ແມ່ນການຂຶ້ນທະບຽນ, ອອກອະນຸຍາດ, ກວດກາ ແລະ ຕິດຕາມ ອາຫານ, ທາດເພີ່ມອາຫານ, ພາຊະນະບັນຈຸ ແລະ ຫຸ້ມຫໍ່ອາຫານນໍາເຂົ້າ, ສົ່ງອອກ, ນໍາເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນໍາເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນ ອາຫານ.

**ມາດຕາ 3 ການອະທິບາຍຄຳສັບ (ປັບປຸງ)**

ບັນດາຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ອາຫານ** ໝາຍເຖິງ ວັດຖຸ ຫຼື ສານ ຊຶ່ງຢູ່ໃນຮູບແບບ ສຳເລັດຮູບ, ເຄິ່ງສຳເລັດຮູບ ຫຼື ບໍ່ທັນໄດ້ປຸງແຕ່ງ ເປັນຕົ້ນ ອາຫານສົດ, ດິບ, ເພື່ອການບໍລິໂພກຂອງຄົນລວມທັງເຄື່ອງດື່ມ, ເຄື່ອງດື່ມທີ່ມີທາດເຫຼົ້າ, ຜະລິດຕະພັນອື່ນ ແລະ ສານໃດໜຶ່ງທີ່ນຳໃຊ້ໃນການຜະລິດ, ການກະກຽມປຸງແຕ່ງ ຫຼື ການບຳບັດອາຫານ ແຕ່ບໍ່ລວມເອົາເຄື່ອງສຳອາງ, ຢາສູບ ແລະ ສານທີ່ນຳໃຊ້ເປັນຢາປົວພະຍາດ;
2. **ການນຳເຂົ້າ - ສົ່ງອອກ** ໝາຍເຖິງ ການນຳເອົາອາຫານອອກ ຫຼື ນຳເຂົ້າມາໃນ ສປປ ລາວ ລວມທັງການນຳເຂົ້າຊົ່ວຄາວ ແລະ ນຳເຂົ້າເພື່ອວາງສະແດງ;
3. **ການຜ່ານແດນ** ໝາຍເຖິງ ການຂົນສົ່ງອາຫານໄປຍັງປະເທດທີສາມ ທີ່ຜ່ານດິນແດນຂອງ ສປປ ລາວ;
4. **ການນຳເຂົ້າຊົ່ວຄາວ** ໝາຍເຖິງ ການນຳເຂົ້າອາຫານ, ທາດເພີ່ມອາຫານ ເພື່ອມາຜະລິດ, ແປຮູບ, ແບ່ງບັນຈຸ, ຄ່ຽນຖ່າຍ, ວາງສະແດງ ຫຼື ຈັດເກັບໄວ້ໃນສາງສິນຄ້າໄລຍະໜຶ່ງ ແນໃສ່ເພື່ອສົ່ງອອກຄືນ ຊຶ່ງບໍ່ອະນຸຍາດໃຫ້ຈຳໜ່າຍ, ແຈກຢາຍ ແລະ ທຳລາຍ ໃນ ສປປ ລາວ;
5. **ສົ່ງອອກຊົ່ວຄາວ** ໝາຍເຖິງ ການນຳເອົາອາຫານຈາກ ສປປ ລາວ ເພື່ອໄປວາງສະແດງ, ຄົ້ນຄວ້າ, ທົດລອງ, ວິໄຈ ຢູ່ຕ່າງປະເທດ ໂດຍບໍ່ໄດ້ຈຳໜ່າຍ ຫຼື ມອບໂອນກຳມະສິດ ແລ້ວນຳກັບຄືນ ເຂົ້າມາ ໃນ ສປປ ລາວ;
6. **ການນຳເຂົ້າເພື່ອສົ່ງອອກຕໍ່** ໝາຍເຖິງ ການນຳເອົາອາຫານ ແລະ ທາດເພີ່ມອາຫານ ເຂົ້າມາ ໃນ ສປປ ລາວ ເພື່ອພັກເຊົາ, ຄ່ຽນຖ່າຍ, ເກັບມ້ຽນໃນສາງ ແລ້ວສົ່ງອອກຕໍ່ ໄປຍັງປະເທດທີສາມ ໂດຍບໍ່ໄດ້ຈຳໜ່າຍ, ແຈກຢາຍ ແລະ ທຳລາຍ ຢູ່ໃນ ສປປ ລາວ;
7. **ອາຫານທີ່ນຳເຂົ້າມາເພື່ອວາງສະແດງ** ໝາຍເຖິງ ອາຫານທີ່ອະນຸຍາດໃຫ້ນຳເຂົ້າສະເພາະການວາງສະແດງ ໃນປະລິມານຕາມທີ່ໄດ້ກຳນົດໃນກົດໝາຍ ວ່າດ້ວຍພາສີ;
8. **ທາດເພີ່ມອາຫານ** ໝາຍເຖິງ ສານທີ່ເພີ່ມໃສ່ອາຫານ ເພື່ອຈຸດປະສົງທາງດ້ານເຕັກນິກ ລວມທັງຮູບຮ່າງ, ລົດຊາດ, ກິ່ນ, ສີ ແລະ ອື່ນໆ ທີ່ນຳໃຊ້ໃນການຜະລິດ, ການກະກຽມ, ປຸງແຕ່ງ, ການບຳບັດ, ການຫຸ້ມຫໍ່, ການຂົນສົ່ງ ແລະ ການເກັບຮັກສາອາຫານ ຊຶ່ງອາດເປັນຜົນທາງກົງ ຫຼື ທາງອ້ອມ ຕໍ່ຄຸນລັກສະນະສະເພາະຂອງອາຫານ;
9. **ອົງການຄຸ້ມຄອງຄວາມປອດໄພອາຫານ** ໝາຍເຖິງ ອົງການທີ່ມີອຳນາດຄຸ້ມຄອງກ່ຽວກັບຄວາມປອດໄພອາຫານທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອາຫານ ຊຶ່ງເອີ້ນເປັນພາສາສາກົນວ່າ: Food Safety Authority (FSA);
10. **ການຮັບຮອງເອົາອົງກອນທີສາມ** ໝາຍເຖິງ ອົງກອນ ທີ່ໄດ້ຮັບອະນຸຍາດ ໂດຍອົງການຄຸ້ມຄອງຄວາມປອດໄພອາຫານ ຂອງ ສປປ ລາວ ຫຼື ຈາກອົງການຄຸ້ມຄອງຄວາມປອດໄພອາຫານຂອງປະເທດສົ່ງອອກອາຫານ ເພື່ອປະຕິບັດກິດຈະກຳ ທີ່ກ່ຽວຂ້ອງກັບການຄວບຄຸມຄວາມປອດໄພອາຫານ;
11. **ການຢັ້ງຢືນ** ໝາຍເຖິງ ການຮັບຮອງຢ່າງເປັນທາງການ ດ້ານຄຸນນະພາບ ແລະ ຄວາມປອດໄພອາຫານ ໂດຍອົງການຄຸ້ມຄອງຄວາມປອດໄພອາຫານ ຫຼື ອົງກອນທີສາມທີ່ຖືກຮັບຮູ້ເປັນທາງການ;
12. **ຫ້ອງວິໄຈອາຫານທີ່ເປັນທາງການ** ໝາຍເຖິງ ຫ້ອງວິໄຈອາຫານທີ່ຖືກຮັບຮູ້ ແລະ ອະນຸຍາດຈາກກະຊວງສາທາລະນະສຸກ.
13. **ການບໍລິຈາກອາຫານ ໝາຍເຖິງ** ການນຳເຂົ້າ - ສົ່ງອອກ ແລະ ຜ່ານແດນ ອາຫານ ເພື່ອໄປຊ່ວຍເຫຼືອປະຊາຊົນ ໂດຍຜ່ານ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງຂອງລັດ, ສາກົນ ແລະ ມູນນິທິ ທັງພາຍໃນ ຫຼື ຕ່າງປະເທດ ຊຶ່ງຜູ້ໃຫ້ການບໍລິຈາກ ບໍ່ໄດ້ຫວັງຜົນກຳໄລ, ຂໍ້ຜູກມັດ ຫຼື ສິ່ງຕອບແທນ ຈາກຜູ້ຮັບ.

**ມາດຕາ 4 ຂອບເຂດການນຳໃຊ້ (ປັບປຸງ)**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດກ່ຽວກັບການນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນ ອາຫານ, ທາດເພີ່ມອາຫານ, ພາຊະນະບັນຈຸ ແລະ ຫຸ້ມຫໍ່ອາຫານ ລວມທັງ ການບໍລິຈາກອາຫານ, ຊຶ່ງບໍ່ລວມເອົາການນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນ ຜະລິດຕະພັນກະສິກຳເບື້ອງຕົ້ນທີ່ຄຸ້ມຄອງໂດຍຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 5 ຫຼັກການການປະຕິບັດທາງດ້ານການຄ້າ (ປັບປຸງ)**

ການປະຕິບັດທາງດ້ານການຄ້າ ຕ້ອງປະຕິບັດຕາມຫຼັກການດັ່ງນີ້:

1. **ການຮັບຮູ້ຊຶ່ງກັນ ແລະ ກັນ**

ກົມອາຫານ ແລະ ຢາ ຫຼື ອົງການຄຸ້ມຄອງຄວາມປອດໄພອາຫານ ຕ້ອງໄດ້ມີການຮັບຮູ້ຊຶ່ງກັນ ແລະ ກັນ ກັບບັນດາປະເທດຄູ່ຄ້າ ທີ່ມີລະບົບຄຸ້ມຄອງຄວາມປອດໄພອາຫານ ຫຼື ເງື່ອນໄຂຕ່າງໆ ທີ່ມີຄວາມເທົ່າທຽມກັນ ຫຼື ມີການຕົກລົງສະເພາະລະຫວ່າງ ສປປ ລາວ ແລະ ປະເທດຄູ່ຄ້າ ທີ່ສອດຄ່ອງກັບຂໍ້ຕົກລົງສະບັບນີ້;

2. **ການບໍ່ຈຳແນກປະຕິບັດ**

ການນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນ ອາຫານ ຕ້ອງປະຕິບັດມາດຕະການໃນລັກສະນະເທົ່າທຽມກັນກັບທຸກປະເທດຄູ່ຄ້າ ແລະ ມີຄວາມສະເໝີພາບທັງພາຍໃນ ແລະ ຕ່າງປະເທດ;

3. **ຄວາມໂປ່ງໃສ**

ກົມອາຫານ ແລະ ຢາ ຕ້ອງສະໜອງຂໍ້ມູນກ່ຽວກັບລະບຽບການ ແລະ ມາດຕະການ ກ່ຽວກັບການນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນ ອາຫານທີ່ມີຢູ່ໃນປັດຈຸບັນ ຫຼື ຖ້າມີການປ່ຽນແປງ ຕ້ອງມີການປະກອບສ່ວນຮ່ວມກັບຫຼາຍພາກສ່ວນທີ່ກ່ຽວຂ້ອງ ໂດຍເຜີຍແຜ່ຜ່ານສື່ມວນຊົນ, ໃນຈົດໝາຍເຫດທາງລັດຖະການ ແລະ ຢູ່ທີ່ດ່ານນຳເຂົ້າຢ່າງທັນການອ່ອງໄວ ເພື່ອອຳນວຍຄວາມສະດວກທາງດ້ານການຄ້າ, ຍົກເວັ້ນໃນກໍລະນີສຸກເສີນ.

ກົມອາຫານ ແລະ ຢາ ຕ້ອງຮັບປະກັນໃຫ້ມີເວລາ ຫົກສິບວັນ ສຳລັບການອອກຄຳເຫັນ ກ່ຽວກັບລະບຽບການທີ່ໄດ້ນຳສະເໜີ ເພື່ອການປ່ຽນແປງ.

## ໝວດທີ 2
## ຫຼັກການທົ່ວໄປ ແລະ ເງື່ອນໄຂ

**ມາດຕາ 6 ຫຼັກການທົ່ວໄປ (ປັບປຸງ)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດກ່ຽວກັບການນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນ ອາຫານ ຕ້ອງໄດ້ຂຶ້ນທະບຽນອາຫານ ກ່ອນການຂໍອະນຸຍາດ ນຳກົມອາຫານ ແລະ ຢາ ຫຼື ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ຕາມການມອບໝາຍ, ລາຍລະອຽດໄດ້ກຳນົດໄວ້ ໃນຂໍ້ຕົກລົງ ວ່າດ້ວຍການຂຶ້ນທະບຽນອາຫານ;

ການຂໍອະນຸຍາດ ແມ່ນສາມາດຂໍອະນຸຍາດນໍາເຂົ້າ, ສົ່ງອອກ, ນໍາເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນໍາເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ ຢູ່ກົມອາຫານ ແລະ ຢາ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ຕາມການມອບໝາຍ ແລະ ປະຕິບັດການນໍາເຂົ້າ, ສົ່ງອອກ, ນໍາເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນໍາເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນ ຕົວຈິງຢູ່ດ່ານສາກົນ, ດ່ານປະເພນີ ແລະ ດ່ານທ້ອງຖິ່ນ ຕາມບັນຊີ ທີ່ກະຊວງສາທາລະນະສຸກກໍານົດ ໃນຂອບເຂດທົ່ວປະເທດ ແລະ ຕ້ອງແຈ້ງເອກະສານຕໍ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ປະຈໍາດ່ານ;

ການບໍລິຈາກອາຫານ ຜູ້ໃຫ້ການບໍລິຈາກ ຕ້ອງມີໃບຢັ້ງຢືນຈາກອົງການຈັດຕັ້ງຂອງຜູ້ໃຫ້ ແລະ ຜູ້ຮັບອາຫານ ພາຍໃນ ຫຼື ຕ່າງປະເທດ ແລະ ປະຕິບັດຕາມການນໍາເຂົ້າ - ສົ່ງອອກ ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 7 ເງື່ອນໄຂຂອງຜູ້ ນໍາເຂົ້າ, ສົ່ງອອກ, ນໍາເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນໍາເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນ ອາຫານ (ປັບປຸງ)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ນໍາເຂົ້າ, ສົ່ງອອກ, ນໍາເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນໍາເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນ ອາຫານ ໃນ ສປປ ລາວ ຕ້ອງປະຕິບັດຕາມກົດໝາຍ ວ່າດ້ວຍອາຫານ (ສະບັບປັບປຸງ), ມາດຕາ 34, 35, 36, 40, 41 ແລະ ຂໍ້ຕົກລົງສະບັບນີ້.

ຜູ້ນໍາເຂົ້າ, ສົ່ງອອກ, ນໍາເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນໍາເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ ຕ້ອງແມ່ນບໍລິສັດຂາອອກ - ຂາເຂົ້າອາຫານ, ໂຮງງານຜະລິດອາຫານ, ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງ ທີ່ບໍ່ແມ່ນລັດຖະບານ, ສະມາຄົມ ແລະ ມູນນິທິ ຊຶ່ງຕ້ອງມີເງື່ອນໄຂດັ່ງນີ້:

1. ຕ້ອງມີສະຖານທີ່ເໝາະສົມ ໃນການເກັບຮັກສາ ແລະ ແຈກຢາຍອາຫານ ຕາມມາດຕະຖານທີ່ໄດ້ກໍານົດໄວ້ ເປັນຕົ້ນແມ່ນ ສາງ, ຫ້ອງເຢັນສໍາລັບອາຫານທີ່ຕ້ອງຮັກສາຢູ່ໃນຄວາມເຢັນ, ພາຫະນະຂົນສົ່ງ ແລະ ອຸປະກອນທີ່ເໝາະສົມ ເພື່ອຮັບປະກັນຄວາມປອດໄພ ແລະ ຄຸນນະພາບຂອງອາຫານ ໃຫ້ຄົງຢູ່ໃນສະພາບເດີມ;
2. ມີວິຊາການທີ່ໄດ້ຜ່ານການຝຶກອົບຮົມຂັ້ນພື້ນຖານ ດ້ານຄວາມປອດໄພອາຫານ;
3. ມີລະບົບຕິດຕາມ ແລະ ຮຽກຄືນຜະລິດຕະພັນອາຫານ ທີ່ມີບັນຫາທາງດ້ານຄຸນນະພາບ ແລະ ຄວາມປອດໄພ;
4. ຕ້ອງຮັບປະກັນວ່າອາຫານທີ່ນໍາເຂົ້າມາຮອດ ສປປ ລາວ ຕ້ອງມີອາຍຸການບໍລິໂພກໃຫ້ເຫຼືອຢ່າງນ້ອຍ 60 ເປີເຊັນ ກ່ອນໝົດອາຍຸ, ບັນລຸມາດຕະຖານ, ມີຄຸນນະພາບ ແລະ ມີຄວາມປອດໄພ ຍົກເວັ້ນອາຫານຜ່ານແດນທີ່ໄດ້ຮັບການອະນຸຍາດນໍາເຂົ້າຈາກປະເທດທີສາມ.
5. ຜູ້ສົ່ງຜ່ານອາຫານ ຕ້ອງຍື່ນເອກະສານຕາມແບບຟອມທີ່ໄດ້ກໍານົດໄວ້ ຢ່າງໜ້ອຍ 05 ວັນລັດຖະການ ກ່ອນວັນທີຈະສົ່ງຜ່ານ ຢູ່ກົມອາຫານ ແລະ ຢາ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນຫຼວງ ຕາມການມອບໝາຍ ເພື່ອພິຈາລະນາ.

## ໝວດທີ 3
## ການນໍາເຂົ້າ, ນໍາເຂົ້າຊົ່ວຄາວ ແລະ ນໍາເຂົ້າເພື່ອສົ່ງອອກຕໍ່ ອາຫານ

**ມາດຕາ 8 ຫຼັກການກ່ຽວກັບການນໍາເຂົ້າອາຫານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ດໍາເນີນທຸລະກິດກ່ຽວກັບການນໍາເຂົ້າອາຫານເພື່ອຈໍາໜ່າຍໃນ ສປປ ລາວ ຈະຕ້ອງໄດ້ຂຶ້ນທະບຽນອາຫານ ນໍາກົມອາຫານ ແລະ ຢາ ຫຼື ພະ

ແນກສາທາລະນະສຸກແຂວງ ຕາມການມອບໝາຍ.

ການນຳເຂົ້າອາຫານຕ້ອງປະຕິບັດຕາມກົດໝາຍ, ລະບຽບການ ແລະ ມາດຕະຖານອາຫານຂອງ ສປປ ລາວ ແລະ ຕ້ອງຮັບປະກັນອາຫານມີຄວາມປອດໄພ ແລະ ເໝາະສົມແກ່ການບໍລິໂພກ.

**ມາດຕາ 9 ການປະກອບເອກະສານຂໍອະນຸຍາດນຳເຂົ້າ**

ເອກະສານທີ່ຕ້ອງປະກອບ ເພື່ອຂໍອະນຸຍາດນຳເຂົ້າມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດ ນຳເຂົ້າອາຫານ (1 ສະບັບ);
2. ໃບຢັ້ງຢືນການຂຶ້ນທະບຽນອາຫານຂອງ ສປປ ລາວ (1 ສະບັບ);
3. ໃບແຈ້ງລາຄາສິນຄ້າ ແລະ ໃບມັດຫໍ່ສິນຄ້າ (3 ສະບັບ);
4. ໃບຢັ້ງຢືນຜົນການວິໄຈທາງດ້ານຄວາມປອດໄພອາຫານ ຈາກອົງການຄຸ້ມຄອງຄວາມປອດໄພອາຫານປະເທດສົ່ງອອກ ຫຼື ຫ້ອງວິໄຈທີ່ກະຊວງສາທາລະນະສຸກຮັບຮູ້ (1 ສະບັບ);
5. ໃບຢັ້ງຢືນການຂຶ້ນທະບຽນ ຫຼື ໃບອະນຸຍາດຈຳໜ່າຍອາຫານ ຈາກອົງການຄຸ້ມຄອງຄວາມປອດໄພອາຫານຂອງປະເທດສົ່ງອອກ (1 ສະບັບ);
6. ໃບຢັ້ງຢືນການຜະລິດອາຫານທີ່ດີຈາກປະເທດສົ່ງອອກ (GMP/GHP ຫຼື HACCP), ໃບຢັ້ງຢືນລະບົບຄຸ້ມຄອງຄວາມປອດໄພອາຫານ (ISO 22000) (1 ສະບັບ);
7. ສຳເນົາໃບທະບຽນວິສາຫະກິດ (1 ສະບັບ);
8. ສະຫຼາກ ຫຼື ສະຕິກເກີ ເປັນພາສາລາວ (1 ສະບັບ);
9. ຕົວຢ່າງຜະລິດຕະພັນອາຫານ (ຊະນິດລະ 1ຕົວຢ່າງ).

ໃບຢັ້ງຢືນຕ້ອງມີອາຍຸການນຳໃຊ້ຢ່າງໜ້ອຍ 03 ເດືອນ, ເປັນພາສາອັງກິດ ແລະ ສະບັບແທ້, ຖ້າສະບັບສຳເນົາ ໃຫ້ຈ້ຳກາຂອງບໍລິສັດນຳເຂົ້າ.

**ມາດຕາ 10 ການກວດສອບສະຖານທີ່ຕົ້ນກຳເນີດຜະລິດຕະພັນອາຫານ**

ເພື່ອປະຕິບັດຕາມການຕົກລົງທາງດ້ານການຄ້າ ສອງຝ່າຍ ຫຼື ຫຼາຍຝ່າຍ ທີ່ຮັບຮູ້ຊຶ່ງກັນ ແລະ ກັນ ໃນການອອກອະນຸຍາດນຳເຂົ້າ, ອົງການຄຸ້ມຄອງຄວາມປອດໄພອາຫານ ຂອງ ສປປ ລາວ ສາມາດຕິດຕໍ່ປະສານງານກັບອົງການຄຸ້ມຄອງຄວາມປອດໄພອາຫານ ຂອງປະເທດສົ່ງອອກ ເພື່ອດຳເນີນການກວດສອບສະຖານທີ່ຜະລິດອາຫານ ໃນປະເທດຕົ້ນກຳເນີດ ບົນພື້ນຖານການຮ່ວມມື ແລະ ລະບຽບການທີ່ກຳນົດໄວ້.

ກໍລະນີ ການສະເໜີຂໍກວດສອບສະຖານທີ່ຜະລິດອາຫານຖືກປະຕິເສດ, ຜະລິດຕະພັນອາຫານນຳເຂົ້າດັ່ງກ່າວ ຈະບໍ່ອະນຸຍາດໃຫ້ນຳເຂົ້າ ໃນ ສປປ ລາວ.

**ມາດຕາ 11 ການກຳນົດສະຖານະພາບ ແລະ ລະດັບຂອງການກວດກາ**

ກົມອາຫານ ແລະ ຢາ ເປັນຜູ້ກຳນົດສະຖານະພາບ ແລະ ລະດັບການກວດກາຜູ້ນຳເຂົ້າອາຫານໂດຍອີງໃສ່ ຂໍ້ຕົກລົງວ່າດ້ວຍ ການກວດກາອາຫານ, ສະບັບເລກທີ 297/ກຊສ 2012; ມາດຕາ 5, ມາດຕາ 6 ແລະ ຄູ່ມືການກວດກາ ເພື່ອກຳນົດສະຖານະພາບທີ່ແທ້ຈິງ ແລະ ຄວາມຖີ່ຂອງການກວດກາ.

ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ເປັນຜູ້ສະເໜີມາຍັງກົມອາຫານ ແລະ ຢາ ໃນການຈັດສະຖານະພາບໂດຍການສະໜອງຂໍ້ມູນການກວດກາ, ການປະເມີນຄວາມສ່ຽງ, ປະຫວັດຄວາມເປັນມາຂອງຜູ້ປະກອບການທຸລະກິດອາຫານ.

**ມາດຕາ 12 ການມອບໝາຍໜ້າທີ່ ຈາກກົມອາຫານ ແລະ ຢາ ໃຫ້ແກ່ອົງກອນທີສາມ**

ກົມອາຫານ ແລະ ຢາ ເປັນຜູ້ພິຈາລະນາມອບໝາຍ ໃຫ້ອົງກອນທີສາມ ຊຶ່ງລວມທັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາກລັດ ຫຼື ເອກກະຊົນ ໃຫ້ປະຕິບັດໜ້າທີ່ກ່ຽວກັບການຄວບຄຸມອາຫານນໍາເຂົ້າແທນຕົນດັ່ງຕໍ່ໄປນີ້:

1. ປະຕິບັດການກວດກາ;
2. ເກັບຕົວຢ່າງ;
3. ທົດສອບ ແລະ ວິໄຈອາຫານ;

ໃນການປະຕິບັດກິດຈະກໍາຂ້າງເທິງນີ້, ບຸກຄົນທີສາມ ຫຼື ຜູ້ທີ່ຖືກມອບໝາຍຈະຖືກຕິດຕາມ ແລະ ປະເມີນຜົນຂອງການຈັດຕັ້ງປະຕິບັດໃຫ້ມີຄວາມສອດຄ່ອງກັບຂອບເຂດຈຸດປະສົງ ແລະ ເປົ້າໝາຍຕາມທີ່ໄດ້ຮັບການມອບໝາຍ.

ບຸກຄົນທີສາມ ຫຼື ຜູ້ທີ່ຖືກມອບໝາຍຕ້ອງສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດໃຫ້ກົມອາຫານ ແລະ ຢາຕາມທີ່ໄດ້ກໍານົດ.

**ມາດຕາ 13 ການຮັບຮູ້ໃບຢັ້ງຢືນ**

ກົມອາຫານ ແລະ ຢາ, ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ ຈະຮັບຮູ້ໃບຢັ້ງຢືນຄວາມປອດໄພອາຫານທີ່ອອກໃຫ້ໂດຍ ອົງການຄຸ້ມຄອງຄວາມປອດໄພອາຫານ ຂອງປະເທດຜູ້ສົ່ງອອກ ຫຼື ບຸກຄົນທີສາມທີ່ບັນລຸຕາມເງື່ອນໄຂການນໍາເຂົ້າອາຫານຂອງ ສປປ ລາວ.

**ມາດຕາ 14 ການນໍາເຂົ້າອາຫານຮັບໃຊ້ສ່ວນບຸກຄົນ (ປັບປຸງ)**

ບຸກຄົນທີ່ມີຈຸດປະສົງນໍາເຂົ້າອາຫານ ເພື່ອການບໍລິໂພກສ່ວນຕົວ, ພາຍໃນຄອບຄົວ ແລະ ອື່ນໆທີ່ບໍ່ແມ່ນການຄ້າ ອາຫານດັ່ງກ່າວຕ້ອງ ມີມູນຄ່າ ບໍ່ເກີນ 1.500.000 ກີບ (ໜຶ່ງລ້ານຫ້າແສນກີບ) ແລະ ມີນໍ້າໜັກ ບໍ່ເກີນ 2 ກິໂລກຣາມ ຕໍ່ຄົນ. ຕ້ອງຮັບປະກັນຄຸນນະພາບ, ຄວາມປອດໄພ ແລະ ໄດ້ຮັບການກວດກາຈາກເຈົ້າໜ້າທີ່ອາຫານ ແລະ ຢາ ປະຈໍາດ່ານ.

**ມາດຕາ 15 ການນໍາເຂົ້າ ເພື່ອການບໍລິຈາກອາຫານ (ໃໝ່)**

ບຸກຄົນ, ນິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ນໍາເຂົ້າອາຫານ ເພື່ອບໍລິຈາກ ຫຼື ຊ່ວຍເຫຼືອຫລ້າອາຫານ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄໍາຮ້ອງຂໍອະນຸຍາດ ນໍາເຂົ້າອາຫານ (1 ສະບັບ);
2. ໃບແຈ້ງລາຄາ ແລະ ໃບຫຸ້ມຫໍ່ (3 ສະບັບ);
3. ໃບຢັ້ງຢືນຜົນການວິໄຈທາງດ້ານຄວາມປອດໄພອາຫານ ຈາກອົງການຄຸ້ມຄອງຄວາມປອດໄພອາຫານປະເທດສົ່ງອອກ ຫຼື ຫ້ອງວິໄຈທີ່ກະຊວງສາທາລະນະສຸກຮັບຮູ້ (1 ສະບັບ);
4. ໃບຢັ້ງຢືນການຂຶ້ນທະບຽນ ຫຼື ໃບອະນຸຍາດຈໍາໜ່າຍອາຫານ ຈາກອົງການຄຸ້ມຄອງຄວາມປອດໄພອາຫານຂອງປະເທດສົ່ງອອກ ຫຼື ໃບຢັ້ງຢືນການຜະລິດອາຫານທີ່ດີຈາກປະເທດສົ່ງອອກ (GMP/GHP ຫຼື HACCP), ໃບຢັ້ງຢືນລະບົບຄຸ້ມຄອງຄວາມປອດໄພອາຫານ (ISO 22000); (1 ສະບັບ);
5. ສໍາເນົາໃບທະບຽນວິສາຫະກິດ (ຖ້າມີ) (1 ສະບັບ);
6. ສະຫຼາກ ຫຼື ສະຕິກເກີ ເປັນພາສາລາວ (1 ສະບັບ);
7. ຕົວຢ່າງຜະລິດຕະພັນອາຫານ (ຊະນິດລະ 1 ຕົວຢ່າງ);

8. ໃບຢັ້ງຢືນການຮັບຮູ້ການຊ່ວຍເຫຼືອເປັນຕົ້ນແມ່ນ ບົດບັນທຶກ, ບົດບັນທຶກຄວາມເຂົ້າໃຈ (1 ສະບັບ);

ໃບຢັ້ງຢືນຕ້ອງມີອາຍຸການນຳໃຊ້ຢ່າງໜ້ອຍ 03 ເດືອນ, ເປັນພາສາອັງກິດ ແລະ ສະບັບແທ້, ຖ້າສະບັບສຳເນົາ ໃຫ້ຈ້ຳກາຂອງບໍລິສັດນຳເຂົ້າ ຫຼື ອົງການຈັດຕັ້ງທີ່ຂໍອະນຸຍາດນຳເຂົ້າ.

**ມາດຕາ 16 ການນຳເຂົ້າຊົ່ວຄາວ ແລະ ນຳເຂົ້າເພື່ອສົ່ງອອກຕໍ່ (ໃໝ່)**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຈະດຳເນີນການນຳເຂົ້າອາຫານ ຊົ່ວຄາວ ແລະ ນຳເຂົ້າເພື່ອສົ່ງອອກຕໍ່ ລວມທັງ ການວາງສະແດງ ແລະ ຄົ້ນຄວ້າວິໄຈ ຕ້ອງໄດ້ຂໍອະນຸຍາດນຳກົມອາຫານ ແລະ ຢາ ແລະ ຫ້າມຈຳໜ່າຍອາຫານດັ່ງກ່າວ ໃນ ສປປ ລາວ.

**ມາດຕາ 17 ການປະກອບເອກະສານ ນຳເຂົ້າຊົ່ວຄາວ ແລະ ນຳເຂົ້າເພື່ອສົ່ງອອກຕໍ່ (ໃໝ່)**

ການຂໍອະນຸຍາດ ນຳເຂົ້າຊົ່ວຄາວ ແລະ ນຳເຂົ້າເພື່ອສົ່ງອອກຕໍ່ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດ ນຳເຂົ້າອາຫານ (1 ສະບັບ);
2. ໃບແຈ້ງລາຄາ ແລະ ໃບຫຸ້ມຫໍ່ (3 ສະບັບ);
3. ໃບຢັ້ງຢືນຮັບຮອງການປອດເຊື້ອພະຍາດ (1 ສະບັບ);
4. ໃບຢັ້ງຢືນຮັບຮອງຄວາມປອດໄພອາຫານ ຈາກປະເທດສົ່ງອອກເປັນຕົ້ນແມ່ນ ໃບຢັ້ງຢືນການຂຶ້ນທະບຽນ ຫຼື ໃບອະນຸຍາດຈຳໜ່າຍອາຫານ (1 ສະບັບ);
5. ສຳເນົາໃບທະບຽນວິສາຫະກິດ (1 ສະບັບ);
6. ໜັງສືເຊີນເຂົ້າຮ່ວມການວາງສະແດງ (ຖ້າມີ) (1 ສະບັບ).

ໃບຢັ້ງຢືນຕ້ອງມີອາຍຸການນຳໃຊ້ຢ່າງໜ້ອຍ 03 ເດືອນ, ເປັນພາສາອັງກິດ ແລະ ສະບັບແທ້, ຖ້າສະບັບສຳເນົາ ໃຫ້ຈ້ຳກາຂອງບໍລິສັດນຳເຂົ້າ ຫຼື ອົງການຈັດຕັ້ງທີ່ຂໍອະນຸຍາດນຳເຂົ້າ.

## ໝວດທີ 4
## ການສົ່ງອອກ ແລະ ສົ່ງອອກຊົ່ວຄາວ ອາຫານ

**ມາດຕາ 18 ຫຼັກການຢັ້ງຢືນການສົ່ງອອກ ແລະ ສົ່ງອອກຊົ່ວຄາວ ອາຫານ (ປັບປຸງ)**

ການຢັ້ງຢືນການສົ່ງອອກ ແລະ ສົ່ງອອກຊົ່ວຄາວ ອາຫານ ມີຫຼັກການດັ່ງລຸ່ມນີ້:

1. ອາຫານ ທີ່ສົ່ງອອກຈາກ ສປປ ລາວ ຕ້ອງບັນລຸມາດຕະຖານ, ຄຸນນະພາບ ແລະ ຄວາມປອດໄພຕາມທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍອາຫານ ມາດຕາ 34 ການສົ່ງອອກອາຫານ ແລະ ປະຕິບັດຕາມລະບຽບການຂອງປະເທດຜູ້ນຳເຂົ້າ;
2. ໃບຢັ້ງຢືນການສົ່ງອອກອາຫານ ຕ້ອງອອກໃຫ້ໂດຍກົມອາຫານ ແລະ ຢາ ຫຼື ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ຕາມການມອບໝາຍ;
3. ໃນກໍລະນີປະເທດຜູ້ນຳເຂົ້າບໍ່ຮຽກຮ້ອງການຢັ້ງຢືນ ແມ່ນສາມາດສົ່ງອອກ ໂດຍບໍ່ຕ້ອງຂໍໃບຢັ້ງຢືນ.

**ມາດຕາ 19 ການປະກອບເອກະສານຂໍໃບຢັ້ງຢືນການສົ່ງອອກ, ສົ່ງອອກຊົ່ວຄາວ ແລະ ສົ່ງອອກ ເພື່ອການບໍລິຈາກອາຫານ (ປັບປຸງ)**

ຜູ້ສົ່ງອອກ, ສົ່ງອອກຊົ່ວຄາວ ແລະ ສົ່ງອອກ ເພື່ອການບໍລິຈາກ ອາຫານ ທີ່ຕ້ອງການ ການຢັ້ງຢືນການສົ່ງອອກ ແມ່ນໃຫ້ສະເໜີເຖິງ ກົມອາຫານ ແລະ ຢາ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນ

ຫຼວງ ຕາມແບບຟອມ ແລະ ປະກອບເອກະສານເພື່ອຂໍໃບຢັ້ງຢືນ ດັ່ງນີ້:

1. ໃບຄໍາຮ້ອງຂໍອະນຸຍາດ ສົ່ງອອກອາຫານ (1 ສະບັບ);
2. ໃບແຈ້ງລາຄາ ແລະ ໃບຫຸ້ມຫໍ່ (3 ສະບັບ);
3. ໃບຢັ້ງຢືນຄວາມປອດໄພອາຫານ ຫຼື ລະບົບຄຸ້ມຄອງຄວາມປອດໄພອາຫານ ເປັນຕົ້ນ ແມ່ນ ໃບຢັ້ງຢືນການຂຶ້ນທະບຽນອາຫານ, ໃບຢັ້ງຢືນຄຸນນະພາບຂອງຜະລິດຕະພັນ ອາຫານ, ໃບຢັ້ງຢືນການຜະລິດອາຫານທີ່ດີ (GMP/GHP ຫຼື HACCP), ໃບຢັ້ງຢືນ ລະບົບຄຸ້ມຄອງຄວາມປອດໄພອາຫານ (ISO 22000) ຫຼື ໃບຢັ້ງຢືນອື່ນທີ່ທຽບເທົ່າ (1 ສະບັບ);
4. ສໍາເນົາ ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດດໍາເນີນທຸລະກິດ (1 ສະບັບ).

ໃບຢັ້ງຢືນຕ້ອງມີອາຍຸການນໍາໃຊ້ຢ່າງໜ້ອຍ 03 ເດືອນ, ເປັນພາສາອັງກິດ ແລະ ສະບັບແທ້, ຖ້າ ສະບັບສໍາເນົາ ໃຫ້ຈ້ຳກາຂອງບໍລິສັດນໍາເຂົ້າ ຫຼື ອົງການຈັດຕັ້ງທີ່ຂໍອະນຸຍາດນໍາເຂົ້າ.

## ໝວດທີ 5
## ການຜ່ານແດນອາຫານ

### ມາດຕາ 20 ຫຼັກການກ່ຽວກັບການຜ່ານແດນອາຫານ (ປັບປຸງ)

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຈະຂົນສົ່ງອາຫານ ຈາກປະເທດຕົ້ນທາງຜ່ານ ສປປ ລາວ ໄປ ຫາ ປະເທດທີສາມ ຕ້ອງໄດ້ຂໍອະນຸຍາດຜ່ານແດນ ຈາກກົມອາຫານ ແລະ ຢາ, ພະແນກສາທາລະນະສຸກ ແຂວງ, ນະຄອນ ຕາມຫຼັກການດັ່ງນີ້:

1. ແຈ້ງເອກະສານຂໍອະນຸຍາດຜ່ານແດນທາງການ ຕໍ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ປະຈໍາດ່ານ ທີ່ນໍາ ເຂົ້າ - ສົ່ງອອກ ຂອງ ສປປ ລາວ;
2. ຖ້າມີການຄ່ຽນຖ່າຍສິນຄ້າໃສ່ລົດບັນທຸກອື່ນ ຫຼື ລົງສາງກ່ອນການຜ່ານແດນນັ້ນ ຕ້ອງໄດ້ຜ່ານການ ກວດກາ ແລະ ຢັ້ງຢືນຈາກເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ຕາມລະບຽບການກ່ຽວກັບການຜ່ານ ແດນ ທີ່ໄດ້ກໍານົດໄວ້ໃນມາດຕາ 36 ຂອງກົດໝາຍວ່າດ້ວຍອາຫານ;
3. ຮັບປະກັນວ່າ ການສົ່ງອາຫານຜ່ານດິນແດນຂອງ ສປປ ລາວ ໄດ້ດໍາເນີນໂດຍວິທີການ ທີ່ຮັບປະກັນບໍ່ ໃຫ້ເກີດມີຄວາມສ່ຽງ ຫຼື ແຜ່ກະຈາຍພະຍາດ ທີ່ເກີດມາຈາກອາຫານດັ່ງກ່າວຢູ່ໃນ ສປປ ລາວ.

### ມາດຕາ 21 ການປະກອບເອກະສານຂໍອະນຸຍາດຜ່ານແດນ (ປັບປຸງ)

ການຂໍອະນຸຍາດຜ່ານແດນ ຕ້ອງປະກອບເອກະສານ ດັ່ງນີ້:

1. ໃບຄໍາຮ້ອງຂໍອະນຸຍາດຜ່ານແດນອາຫານ (1 ສະບັບ);
2. ໃບແຈ້ງລາຄາ ແລະ ໃບຫຸ້ມຫໍ່ (3 ສະບັບ);
3. ໃບສັ່ງຊື້ສິນຄ້າ (3 ສະບັບ);
4. ໃບອະນຸຍາດນໍາເຂົ້າຂອງປະເທດທີສາມ (1 ສະບັບ);
5. ໃບຂົນສົ່ງສິນຄ້າ (ຖ້າມີ) (1 ສະບັບ);
6. ໃບທະບຽນວິສາຫະກິດ (ຖ້າບໍລິສັດ ຫຼື ໂຮງງານຕັ້ງຢູ່ ສປປ ລາວ) (1 ສະບັບ);
7. ໃບຢັ້ງຢືນຮັບຮອງການປອດເຊື້ອພະຍາດ (1 ສະບັບ);
8. ໃບຢັ້ງຢືນຮັບຮອງຄວາມປອດໄພອາຫານຈາກປະເທດສົ່ງອອກ ເປັນຕົ້ນແມ່ນ ໃບຢັ້ງຢືນການຂຶ້ນທະບຽນ, ໃບຢັ້ງຢືນການຈໍາໜ່າຍອາຫານ, ໃບຢັ້ງຢືນການຜະລິດ

ອາຫານທີ່ດີຈາກປະເທດສົ່ງອອກ (GMP/GHP ຫຼື HACCP), ໃບຢັ້ງຢືນລະບົບຄຸ້ມຄອງຄວາມປອດໄພອາຫານ (ISO 22000) ແລະ ໃບຢັ້ງຢືນອື່ນທີ່ທຽບເທົ່າ (1 ສະບັບ).

ໃບຢັ້ງຢືນຕ້ອງມີອາຍຸການນຳໃຊ້ຢ່າງໜ້ອຍ 03 ເດືອນ, ເປັນພາສາອັງກິດ ແລະ ສະບັບແທ້, ຖ້າສະບັບສຳເນົາ ໃຫ້ຈ້ຳກາຂອງບໍລິສັດນຳເຂົ້າ.

## ໝວດທີ 6
## ຂັ້ນຕອນການຂໍ, ພິຈາລະນາອອກ, ໂຈະ ແລະ ລຶບລ້າງ ໃບອະນຸຍາດ ຫຼື ໃບຢັ້ງຢືນ

### ມາດຕາ 22 ຂັ້ນຕອນການຂໍ ໃບອະນຸຍາດ ຫຼື ໃບຢັ້ງຢືນ (ປັບປຸງ)

ຜູ້ນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ ຕ້ອງຍື່ນເອກະສານຕາມແບບຟອມທີ່ໄດ້ກຳນົດໄວ້ ຢ່າງໜ້ອຍ 05 ວັນລັດຖະການ ກ່ອນວັນທີຈະນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ ຢູ່ກົມອາຫານ ແລະ ຢາ ຫຼື ຜ່ານທາງລະບົບເອເລັກໂທຣນິກ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນຫຼວງທີ່ໄດ້ຮັບການມອບໝາຍ ເພື່ອພິຈາລະນາ.

### ມາດຕາ 23 ການພິຈາລະນາອອກ ໃບອະນຸຍາດ ຫຼື ໃບຢັ້ງຢືນ (ປັບປຸງ)

1. ກົມອາຫານ ແລະ ຢາ ຫຼື ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ຈະອອກ ໃບອະນຸຍາດນຳເຂົ້າ, ນຳເຂົ້າຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່, ຜ່ານແດນອາຫານ ຫຼື ໃບຢັ້ງຢືນການສົ່ງອອກ, ສົ່ງອອກຊົ່ວຄາວ ໃຫ້ຜູ້ປະກອບການ ພາຍໃນກຳນົດ 03 ວັນ ລັດຖະການ ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ;
2. ໃບອະນຸຍາດ ຫຼື ໃບຢັ້ງຢືນ ແມ່ນໃຊ້ໄດ້ຄັ້ງດຽວ ພາຍໃນໄລຍະເວລາ 30 ວັນ ລັດຖະການ ແລະ ໃນກໍລະນີໝົດອາຍຸແຕ່ຍັງບໍ່ໄດ້ ນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ ແມ່ນສາມາດຂໍຕໍ່ໄດ້ອີກໜຶ່ງຄັ້ງ ແລະ ມີອາຍຸການນຳໃຊ້ໄດ້ 30 ວັນ ລັດຖະການ;
3. ຜູ້ນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ ຕ້ອງແຈ້ງໃບອະນຸຍາດ ຫຼື ໃບຢັ້ງຢືນ ຕໍ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ທີ່ປະຈຳດ່ານ.

### ມາດຕາ 24 ການພິຈາລະນາຕໍ່ອາຍຸ ໃບອະນຸຍາດ ຫຼື ໃບຢັ້ງຢືນ (ປັບປຸງ)

ໃບອະນຸຍາດ ຫຼື ໃບຢັ້ງຢືນ ດັ່ງກ່າວມີອາຍຸການນຳໃຊ້ 30 ວັນ ລັດຖະການ ແລະ ສາມາດຕໍ່ອາຍຸໄດ້ໜຶ່ງຄັ້ງ ກ່ອນໝົດອາຍຸການນຳໃຊ້ ໂດຍຍື່ນເອກະສານ ຢູ່ກົມອາຫານ ແລະ ຢາ, ຜ່ານທາງລະບົບເອເລັກໂຕຼນິກ ຫຼື ຂະແໜງ ອາຫານ ແລະ ຢາ ແຂວງ, ນະຄອນຫຼວງ ທີ່ໄດ້ຮັບການມອບໝາຍ ໂດຍປະກອບເອກະສານ ດັ່ງນີ້:

1. ໃບຄຳຮ້ອງ ຂໍຕໍ່ອາຍຸ ຕາມແບບຟອມ
2. ໃບອະນຸຍາດຕົ້ນສະບັບ

### ມາດຕາ 25 ການໂຈະ ແລະ ລຶບລ້າງ ໃບອະນຸຍາດ ຫຼື ໃບຢັ້ງຢືນ (ປັບປຸງ)

ກົມອາຫານ ແລະ ຢາ, ພະແນກສາທາລະນະສຸກ ແຂວງ, ນະຄອນຫຼວງ ສາມາດໂຈະ ແລະ ລຶບ

ລ້າງໃບອະນຸຍາດນໍາເຂົ້າ, ນໍາເຂົ້າຊົ່ວຄາວ, ນໍາເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ ຫຼື ໃບຢັ້ງຢືນ ສົ່ງອອກ, ສົ່ງອອກຊົ່ວຄາວ ຕາມແຕ່ລະກໍລະນີ ດັ່ງນີ້:

1. ອາຫານນໍາເຂົ້າ - ສົ່ງອອກ ທີ່ພາໃຫ້ເກີດພະຍາດ ຫຼື ກໍລະນີສຸກເສີນ ຈະຖືກໂຈະ ຈົນກວ່າຈະໄດ້ຮັບການແກ້ໄຂ;
2. ຜູ້ຖືໃບອະນຸຍາດ ຫຼື ໃບຢັ້ງຢືນ ຝ່າຝືນລະບຽບກົດໝາຍວ່າດ້ວຍອາຫານ, ນິຕິກໍາໃດໜຶ່ງທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້ ຈະຖືກລົບລ້າງ;
3. ໃບອະນຸຍາດນໍາເຂົ້າ ຫຼື ໃບຢັ້ງຢືນສົ່ງອອກ ຖືກຮັບຮອງ ແຕ່ບໍ່ມາເອົາພາຍໃນກໍານົດ 90 ວັນ ຈະຖືກລົບລ້າງ;
4. ການແຈ້ງເຕືອນຈາກພາກພື້ນ ແລະ ສາກົນກ່ຽວກັບຜົນກະທົບ ຫຼື ຄວາມສ່ຽງຂອງອາຫານທີ່ຈະນໍາເຂົ້າ , ສົ່ງອອກ, ນໍາເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນໍາເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ ຈະຖືກໂຈະ.

## ໝວດທີ 7
## ການກວດກາຢູ່ດ່ານ

### ມາດຕາ 26 ຂັ້ນຕອນການກວດກາຢູ່ດ່ານ (ປັບປຸງ)

ເມື່ອອາຫານເຂົ້າມາເຖິງດ່ານ, ເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈໍາດ່ານ ຕ້ອງໄດ້ກວດກາອາຫານ ນໍາເຂົ້າ, ສົ່ງອອກ, ນໍາເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນໍາເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນ ຢູ່ດ່ານກວດກາທີ່ໄດ້ກໍານົດໄວ້ ຕາມຂັ້ນຕອນ ໃນຄູ່ມືແນະນໍາການກວດກາ ແລະ ຕ້ອງໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເປັນຕົ້ນ ເຈົ້າໜ້າທີ່ພາສີ, ເຈົ້າໜ້າທີ່ກັກກັນພືດ ແລະ ເຈົ້າໜ້າທີ່ສັດຕະວະແພດ ປະຈໍາດ່ານ ຕາມຫຼັກການບໍລິຫານຄວາມສ່ຽງ

### ມາດຕາ 27 ການປ່ອຍອາຫານແບບມີເງື່ອນໄຂ - ການກວດການອກສະຖານທີ່ (ປັບປຸງ)

ໃນກໍລະນີ ອາຫານນໍາເຂົ້າ ທີ່ຕ້ອງໄດ້ເກັບຮັກສາໄວ້ໃນອຸນຫະພູມສະເພາະ, ແຕ່ຢູ່ໃນດ່ານນໍາເຂົ້າບໍ່ມີສິ່ງອໍານວຍຄວາມສະດວກດັ່ງກ່າວ, ຜູ້ນໍາເຂົ້າຕ້ອງຍ້າຍ ແລະ ເກັບຮັກສາອາຫານໄປໄວ້ ຢູ່ໃນສະຖານທີ່ທີ່ມີເງື່ອນໄຂເໝາະສົມ, ໂດຍບໍ່ໃຫ້ແຈກຢາຍ ຫຼື ຈໍາໜ່າຍເດັດຂາດ ຈົນກ່ວາການກວດກາຈາກເຈົ້າໜ້າທີ່ກວດກາປະຈໍາດ່ານ ແລະ ເຈົ້າໜ້າທີ່ພາສີ ສໍາເລັດພາຍໃນ 48 ຊົ່ວໂມງ.

ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ຕ້ອງໄດ້ຮ່ວມມືກັບເຈົ້າໜ້າທີ່ພາສີ ເພື່ອປ່ອຍອາຫານອອກກ່ອນ, ເຈົ້າໜ້າທີ່ພາສີຕ້ອງໄດ້ບົ່ງບອກໃນແບບຟອມການປ່ອຍອາຫານທີ່ກ່ຽວຂ້ອງວ່າອາຫານນັ້ນຍັງບໍ່ທັນໄດ້ຮັບການກວດກາຈາກເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ທີ່ປະຈໍາຢູ່ດ່ານນໍາເຂົ້າ, ແຕ່ການກວດກາຈະຕ້ອງໄດ້ປະຕິບັດໃນສະຖານທີ່ ທີ່ໄດ້ຕົກລົງກັນໄວ້.

ອາຫານທີ່ໄດ້ປ່ອຍແບບມີເງື່ອນໄຂຕ້ອງໄດ້ເກັບຮັກສາ ແລະ ກັກໄວ້ບໍ່ໃຫ້ແຈກຢາຍ ຫຼື ຈໍາໜ່າຍຈົນກ່ວາການດໍາເນີນການກວດກາສໍາເລັດ.

ເມື່ອໃດອາຫານຫາກໄດ້ຮັບການກວດກາແລ້ວ, ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ, ເຈົ້າໜ້າທີ່ພາສີ ແລະ ຜູ້ນໍາເຂົ້າຕ້ອງໄດ້ລົງລາຍເຊັນຮ່ວມກັນທັນທີໃສ່ແບບຟອມການກວດກາ.

**ມາດຕາ 28 ການຕິດສະຫຼາກອາຫານນຳເຂົ້າ (ປັບປຸງ)**

ຜູ້ນຳເຂົ້າອາຫານຕ້ອງຕິດສະຫຼາກເປັນພາສາລາວ ຕາມຂໍ້ຕົກລົງວ່າດ້ວຍສະຫຼາກອາຫານ ກ່ອນການນຳເຂົ້າ, ສະຫຼາກອາຫານຕ້ອງໄດ້ຜ່ານການກວດກາ ແລະ ໄດ້ຮັບອະນຸຍາດຈາກ ກົມອາຫານ ແລະ ຢາ ຈຶ່ງອະນຸຍາດໃຫ້ໃຊ້ໄດ້. ສຳລັບຜູ້ນຳເຂົ້າອາຫານ ມີຈຸດປະສົງມາຕິດສະຫຼາກຢູ່ໃນ ສປປ ລາວ ແມ່ນຕ້ອງດຳເນີນການຕິດສະຫຼາກໃຫ້ສຳເລັດ ພາຍໃນໄລຍະເວລາທີ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ກຳນົດ ກ່ອນການຈຳໜ່າຍ.

**ມາດຕາ 29 ການດຳເນີນງານໃນກໍລະນີສຸກເສີນດ້ານຄວາມປອດໄພອາຫານ ແລະ ມາດຕະການຕໍ່ອາຫານທີ່ມີຄວາມສ່ຽງ (ປັບປຸງ)**

ອາຫານນຳເຂົ້າທີ່ມີຄວາມສ່ຽງ ຫຼື ເປັນອັນຕະລາຍຮ້າຍແຮງຕໍ່ສຸຂະພາບ ກົມອາຫານ ແລະ ຢາ, ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນຫຼວງ ຕ້ອງໄດ້ປະຕິບັດມາດຕະການຕອບໂຕ້ຢ່າງຮີບດ່ວນ ໂດຍການປະສານສົມທົບກັບບໍລິສັດນຳເຂົ້າ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອປະຕິບັດມາດຕະການແບບສຸກເສີນ ລວມມີການກັກ, ການອາຍັດ ແລະ ຢຶດສິນຄ້າທີ່ສົງໃສ, ການຮຽກເກັບຄືນ, ທຳລາຍຖິ້ມ ຫຼື ສົ່ງກັບຄືນປະເທດຜູ້ສົ່ງອອກ ຕາມແຕ່ກໍລະນີ.

ການປະຕິບັດມາດຕະການດັ່ງກ່າວຕ້ອງແຈ້ງໃຫ້ລະບົບການແຈ້ງເຕືອນ ກ່ຽວກັບຄວາມປອດໄພອາຫານ ໃນລະດັບຊາດ, ພາກພື້ນ (ລະບົບແຈ້ງເຕືອນຮີບດ່ວນສຳລັບອາຫານ ແລະ ອາຫານສັດ ອາຊຽນ (ASEAN Rapid Alert System for Food and Feed; ARASFF)) ແລະ ສາກົນ (ເຄືອຂ່າຍອົງການຄຸ້ມຄອງຄວາມປອດໄພອາຫານ ສາກົນ (International Food Safety Authorities Network; INFOSAN) ແລະ ແຈ້ງການຫາເຈົ້າໜ້າທີ່ກ່ຽວຂ້ອງປະເທດຜູ້ສົ່ງອອກ ໂດຍດ່ວນ.

ອາຫານທີ່ມີການຢັ້ງຢືນວ່າ ມີຄວາມສ່ຽງຕໍ່ສຸຂະພາບ, ບໍ່ບັນລຸມາດຕະຖານດ້ານຄຸນນະພາບ ແລະ ຄວາມປອດໄພຂອງອາຫານ ຢູ່ດ່ານນຳເຂົ້າ ຕ້ອງໄດ້ສົ່ງກັບຄືນປະເທດຜູ້ສົ່ງອອກ.

ຄ່າໃຊ້ຈ່າຍ ທີ່ເກີດຂຶ້ນ, ທີ່ກະທົບຕໍ່ສຸຂະພາບ ແລະ ຄ່າເສຍຫາຍ ແມ່ນເຈົ້າຂອງຜະລິດຕະພັນອາຫານເປັນຜູ້ຮັບຜິດ ຊອບທັງໝົດ.

## ໝວດທີ 8
## ຄວາມຖີ່ ແລະ ປະເພດຂອງການກວດກາການນຳເຂົ້າ

**ມາດຕາ 30 ຄວາມຖີ່ຂອງການກວດກາ (ປັບປຸງ)**

ຄວາມຖີ່ຂອງການກວດກາອາຫານນຳເຂົ້າ ຕ້ອງອີງໃສ່ຄວາມສ່ຽງ, ປະຫວັດການເຄື່ອນໄຫວທຸລະກິດຂອງຜູ້ນຳເຂົ້າ ແລະ ຕ້ອງປະຕິບັດຕາມເນື້ອໃນຂອງ ລະບົບບໍລິຫານຄວາມສ່ຽງ ແລະ ຄູ່ມືການກວດກາ ຕາມແຕ່ລະໄລຍະ.

ອາຫານທີ່ມີຄວາມສ່ຽງສູງ ຫຼື ຜູ້ທີ່ນຳເຂົ້າໃໝ່ ຫຼື ບໍ່ເຄີຍຮູ້ມາກ່ອນ ຕ້ອງເກັບຕົວຢ່າງທຸກຄັ້ງ ຈົນກວ່າຈະບັນລຸຕາມມາດຕະຖານທີ່ກຳນົດ, ຫຼັງຈາກນັ້ນ ການຂົນສົ່ງສິນຄ້າຈະປະຕິບັດການເກັບຕົວຢ່າງຕາມປົກກະຕິ.

**ມາດຕາ 31 ການເກັບຕົວຢ່າງ ແລະ ການວິໄຈ (ປັບປຸງ)**

ການເກັບຕົວຢ່າງ ເພື່ອການທົດສອບ ໂດຍເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ແມ່ນອີງຕາມ

ຄວາມສ່ຽງຂອງອາຫານ ຫຼື ປະເພດຂອງການປົນເປື້ອນ. ວິທີການເກັບຕົວຢ່າງຕ້ອງອີງໃສ່ແຜນການເກັບຕົວຢ່າງ ຂອງ ສປປ ລາວ ຫຼື ກົດລະຫັດ ອາຫານສາກົນ (Codex Alimentarius).

ການວິໄຈຕົວຢ່າງ ຕ້ອງແມ່ນຫ້ອງວິໄຈທີ່ຮັບຮູ້ຢ່າງເປັນທາງການ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 23 ຫ້ອງວິໄຈອາຫານ ຂອງກົດໝາຍວ່າດ້ວຍອາຫານ.

ຜູ້ນຳເຂົ້າອາຫານ ອາດສົ່ງຕົວຢ່າງດ້ວຍຕົນເອງ ໂດຍຜ່ານກົມອາຫານ ແລະ ຢາ ຫຼື ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ຫຼື ຕາມການຮຽກຮ້ອງ ໄປຫ້ອງທົດລອງທີ່ເປັນທາງການ ເພື່ອການວິໄຈ ຫຼື ວິໄຈຄືນ ແລະ ສົ່ງຜົນຂອງການວິໄຈໃຫ້ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ.

ຄ່າໃຊ້ຈ່າຍໃນການວິໄຈແມ່ນ ບໍລິສັດນຳເຂົ້າກ່ຽວຂ້ອງເປັນຜູ້ຮັບຜິດຊອບ.

## ໝວດທີ 9
## ການບັນທຶກຂໍ້ມູນ ແລະ ການລາຍງານ

### ມາດຕາ 32 ຂໍ້ມູນນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ (ປັບປຸງ)

ກົມອາຫານ ແລະ ຢາ ຕ້ອງສ້າງຖານຂໍ້ມູນໃນລະດັບຊາດ ຫຼື ເອກະສານສຳຄັນທີ່ກ່ຽວຂ້ອງກັບການສົ່ງອອກ, ນຳເຂົ້າ, ສົ່ງອອກຊົ່ວຄາວ, ນຳເຂົ້າຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ສົ່ງຜ່ານອາຫານ ທີ່ໄດ້ມາຈາກກົມອາຫານ ແລະ ຢາ, ກອງກວດກາອາຫານ ແລະ ຢາ, ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ ເພື່ອເປັນບ່ອນອີງໃນການລາຍງານ ເຂົ້າໃນຖານຂໍ້ມູນຂອງກະຊວງສາລະນະສຸກ.

ຂໍ້ມູນທີ່ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ໃນຂັ້ນສູນກາງ ແລະ ແຂວງ, ນະຄອນຫຼວງ ຕ້ອງໄດ້ເກັບກຳ ແລະ ຈັດເຂົ້າໃສ່ຖານຂໍ້ມູນ ຫຼື ລະບົບເອກະສານ ສາຄັນມີ ດັ່ງນີ້:

1. ວັນ ເດືອນ ປີ ໃນການກວດກາ ແລະ ປ່ອຍສິນຄ້າ;
2. ປະເພດອາຫານ, ລາຍການ, ນໍ້າໜັກ ແລະ ມູນຄ່າ;
3. ສະຖານທີ່ທຳການຜະລິດ, ຜູ້ຜະລິດ ຫຼື ຜູ້ສະໜອງ ໃນປະເທດຕົ້ນກຳເນີດ;
4. ປະເພດຂອງການກວດກາທີ່ໄດ້ປະຕິບັດ;
5. ຜົນໄດ້ຮັບຂອງການກວດກາ;
6. ວັນ ເດືອນ ປີ ແລະ ມາດຕະການທີ່ໄດ້ປະຕິບັດ ສຳລັບກໍລະນີອາຫານກວດບໍ່ຜ່ານ;
7. ຂໍ້ມູນອື່ນ ທີ່ຈຳເປັນ ຫຼື ຮຽກຮ້ອງ ຈາກກົມອາຫານ ແລະ ຢາ.

ການສະຫຼຸບລາຍງານ ກ່ຽວກັບຂໍ້ມູນການນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ ຕ້ອງສົ່ງໃຫ້ກົມອາຫານ ແລະ ຢາ ເປັນແຕ່ລະໄລຍະ.

### ມາດຕາ 33 ການລາຍງານຂອງການນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ (ປັບປຸງ)

ຜູ້ນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ ຕ້ອງລາຍງານແຜນການ ແລະ ບົດລາຍງານ ນຳເຂົ້າ ຫຼື ສົ່ງອອກອາຫານ ປະຈຳທຸກເດືອນ ແລະ ປະຈຳປີ ກ່ຽວກັບອາຫານນຳເຂົ້າ ຫຼື ສົ່ງອອກຕົວຈິງ ເຖິງກົມອາຫານ ແລະ ຢາ ຫຼື ຂະແໜງອາຫານ ແລະ ຢາ ແຂວງ, ນະຄອນຫຼວງ ມີດັ່ງນີ້:

1. ຊະນິດອາຫານ, ລາຍການ, ນ້ຳໜັກ ແລະ ມູນຄ່າ ອາຫານທີ່ໄດ້ນຳເຂົ້າ ຫຼື ສົ່ງອອກ;
2. ເລກທີຊຸດຜະລິດ, ວັນ ເດືອນ ປີຜະລິດ, ວັນ ເດືອນ ປີໝົດອາຍຸການນຳໃຊ້ ແລະ ວັນ ເດືອນປີການນຳເຂົ້າ ຫຼື ສົ່ງອອກ;
3. ພາຫະນະ ແລະ ເສັ້ນທາງໃນການຂົນສົ່ງ (ທາງບົກ, ທາງນ້ຳ ຫຼື ທາງອາກາດ) ແລະ ດ່ານການນຳເຂົ້າ ຫຼື ສົ່ງອອກ;
4. ປະເທດຕົ້ນກຳເນີດ;
5. ຊື່ ແລະ ທີ່ຢູ່ຂອງຜູ້ສົ່ງອອກຈາກປະເທດສົ່ງອອກ, ປາຍທາງ ແລະ ຂອງຜູ້ນຳເຂົ້າໃນ ສປປ ລາວ;
6. ຜູ້ຜະລິດ, ລວມທັງເລກທີຂຶ້ນທະບຽນສະຖານທີ່ທຳການຜະລິດທີ່ໄດ້ຂຶ້ນທະບຽນໄວ້ແລ້ວ;
7. ບັນຊີລາຍການອາຫານທີ່ບໍ່ຜ່ານຕາມເງື່ອນໄຂຂອງລະບຽບການການນຳເຂົ້າ ຂອງກະຊວງສາທາລະນະສຸກ;
8. ບົດສະຫຼຸບກ່ຽວກັບເຫດການທີ່ເກີດຂຶ້ນ ແລະ ມາດຕະການທີ່ໄດ້ປະຕິບັດຕໍ່ອາຫານທີ່ບໍ່ມີຄວາມປອດໄພ ສຳລັບການນຳເຂົ້າ ຫຼື ການສົ່ງອອກ;
9. ບັນຫາອື່ນໆ ທີ່ກົມອາຫານ ແລະ ຢາ ອາດກຳນົດຂຶ້ນໃນຂໍ້ຕົກລົງຕ່າງໆ ແລະ ຮຽກຮ້ອງເພີ່ມເຕີມຕາມຄວາມຈຳເປັນ.

## ໝວດທີ 10
## ເຈົ້າໜ້າທີ່, ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ ກວດກາອາຫານ ແລະ ຢາ ປະຈຳດ່ານ

### ມາດຕາ 34 ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ປະຈຳດ່ານ (ປັບປຸງ)

ເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ປະຈຳດ່ານ ຕ້ອງແມ່ນພະນັກງານອາຫານ ແລະ ຢາ ທີ່ໄດ້ຖືກແຕ່ງຕັ້ງ ແລະ ຜ່ານການຝຶກອົບຮົມກ່ຽວກັບການກວດກາອາຫານ ນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນ.

### ມາດຕາ 35 ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈຳດ່ານ (ປັບປຸງ)

ເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈຳດ່ານ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ກວດເອກະສານການນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ;
2. ກວດກາຕົວຈິງອາຫານທີ່ນຳເຂົ້າ - ສົ່ງອອກ;
3. ກວດຜ່ານ ຫຼື ປະຕິເສດ ການນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ;
4. ອາຍັດ ຫຼື ຢຶດ ຜະລິດຕະພັນອາຫານ ແລະ ທາດເພີ່ມໃສ່ອາຫານ ທີ່ບໍ່ຖືກຕ້ອງຕາມລະບຽບການດ້ານອາຫານຂອງ ສປປ ລາວ;
5. ເກັບຕົວຢ່າງອາຫານ ຕາມຫຼັກການທີ່ໄດ້ກຳນົດໄວ້;
6. ແນະນຳ ແລະ ກ່າວເຕືອນຜູ້ນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ ທີ່ບໍ່ບັນລຸມາດຕະຖານ;
7. ສະຫຼຸບລາຍງານຜົນຂອງການເຄື່ອນໄຫວ ກວດກາອາຫານນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່, ຜ່ານແດນ ແລະ ການຈັດຕັ້ງປະຕິບັດມາດຕະການຕ່າງໆໃຫ້ຂະ

ແໜງອາຫານ ແລະ ຢາ ແຂວງ, ນະຄອນ ແລະ ກົມອາຫານ ແລະ ຢາ ທຸກອາທິດ, ເດືອນ, ສາມເດືອນ, ຫົກເດືອນ ແລະ ໜຶ່ງປີ.

8. ປະສານງານກັບຂະແໜງການທີ່ກ່ຽວຂ້ອງ ກັບການນໍາເຂົ້າ, ສົ່ງອອກ, ນໍາເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນໍາເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 11
## ຂໍ້ຫ້າມ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 36 ຂໍ້ຫ້າມສໍາລັບຜູ້ປະກອບການ ນໍາເຂົ້າ, ສົ່ງອອກ, ນໍາເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນໍາເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ (ປັບປຸງ)**

ຫ້າມຜູ້ນໍາເຂົ້າ, ສົ່ງອອກ, ນໍາເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນໍາເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານ ປະພຶດ ດັ່ງນີ້:

1. ອາຫານທີ່ບໍ່ໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ;
2. ອາຫານທີ່ບໍ່ໄດ້ຮັບການກວດກາ ຈາກເຈົ້າໜ້າທີ່ກວດກາອາຫານ ແລະ ຢາປະຈໍາດ່ານ;
3. ອາຫານ ທີ່ບໍ່ບັນລຸມາດຕະຖານຄຸນນະພາບ ແລະ ຄວາມປອດໄພ;
4. ປອມແປງເອກະສານ ຫຼື ສະໜອງເອກະສານປອມ
5. ອາຫານທີ່ບໍ່ມີສະຫຼາກ ຫຼື ບໍ່ມີສະຕິກເກີ້ເປັນພາສາລາວ;
6. ອາຫານທີ່ມີອາຍຸຕໍ່າກວ່າ 60 ເປີເຊັນ, ໃກ້ຈະໝົດອາຍຸ ຫຼື ໝົດອາຍຸໃນການບໍລິໂພກ;
7. ອາຫານທີ່ມີລັກສະນະຂັດກັບວັດທະທໍາ ແລະ ຮີດຄອງປະເພນີຂອງ ສປປ ລາວ;
8. ອາຫານທີ່ມີສ່ວນປະສົມຂອງສານເສບຕິດ ອອກລິດຕໍ່ຈິດປະສາດ;
9. ອາຫານ ທີ່ນອນຢູ່ໃນບັນຊີລາຍການອາຫານຕ້ອງຫ້າມຂອງ ສປປ ລາວ ຫຼື ປະເທດທີສາມ;
10. ຈໍາໜ່າຍ ອາຫານສໍາລັບຜ່ານແດນ, ນໍາເຂົ້າຊົ່ວຄາວ ແລະ ນໍາເຂົ້າເພື່ອສົ່ງອອກຕໍ່ ຢູ່ໃນດິນແດນຂອງ ສປປ ລາວ;
11. ອາຫານທີ່ມີຄວາມສ່ຽງສູງ ແລະ ອາຫານໃໝ່ທີ່ບໍ່ໄດ້ຂຶ້ນທະບຽນນາ ກົມອາຫານ ແລະ ຢາ.
12. ປະຕິບັດພຶດຕິກໍາອື່ນ ທີ່ຂັດກັບລະບຽບກົດໝາຍ.

**ມາດຕາ 37 ຂໍ້ຫ້າມສໍາລັບເຈົ້າໜ້າອາຫານ ແລະ ຢາ (ປັບປຸງ)**

ຫ້າມເຈົ້າໜ້າທີ່ອາຫານ ແລະ ຢາປະພຶດ ດັ່ງນີ້:

1. ກົດໜ່ວງຖ່ວງດຶງ, ທວງເອົາສິນບົນ, ຮຽກຮ້ອງຄ່າຕອບແທນ, ສວຍໃຊ້ຖານະຕໍາແໜ່ງ, ສິດ ແລະ ໜ້າທີ່ທາງລັດຖະການເພື່ອຜົນປະໂຫຍດສ່ວນຕົວ;
2. ປະຕິບັດໜ້າທີ່ ທີ່ຂາດຈັນຍາບັນ, ຄວາມຍຸຕິທໍາ, ລໍາອຽງ ແລະ ບໍ່ຖືກຕ້ອງຕາມລະບຽບກົດໝາຍ;
3. ເປີດເຜີຍຄວາມລັບຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົບເຫັນໃນເວລາປະຕິບັດການກວດກາ;

4. ປົກປິດ, ສະໜັບສະໜູນ, ຊ່ວຍເຫຼືອ ແລະ ສົມຮູ້ຮ່ວມຄິດກັບຜູ້ປະກອບການທຸລະກິດອາຫານ ທີ່ບໍ່ບັນລຸມາດຕະຖານຄຸນນະພາບ ແລະ ຄວາມປອດໄພ;
5. ກວດຜ່ານ ອາຫານ ທີ່ບໍ່ມີໃບອະນຸຍາດຈາກກົມອາຫານ ແລະ ຢາ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ;
6. ລະເມີດຫຼັກການການອະນຸຍາດ ແລະ ກວດກາ
7. ປະຕິບັດພຶດຕິກຳອື່ນ ທີ່ຂັດກັບລະບຽບກົດໝາຍ.

### ມາດຕາ 38 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ດ້ວຍຮູບການທີ່ເໝາະສົມ ຈາກກະຊວງສາທາລະນະສຸກ.

### ມາດຕາ 39 ມາດຕະການຕໍ່ຜູ້ລະເມີດ (ປັບປຸງ)

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ ,ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ຫຼື ລົງໂທດອາຍາຕາມແຕ່ກໍລະນີ.

### ມາດຕາ 40 ມາດຕະການສຶກສາອົບຮົມ (ປັບປຸງ)

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ລະເມີດຂໍ້ຫ້າມໃນຂໍ້ຕົກລົງສະບັບນີ້ຈະຖືກປະຕິບັດມາດຕະການດັ່ງລຸ່ມນີ້:

ຄັ້ງທີໜຶ່ງ: ຈະຖືກກ່າວເຕືອນສຶກສາອົບຮົມພ້ອມທັງເຮັດບົດບັນທຶກໄວ້ເປັນຫຼັກຖານ ແລະ ອາຍັດຜະລິດຕະພັນ;

ຄັ້ງທີສອງ: ຈະຖືກອາຍັດຜະລິດຕະພັນ ແລະ ໂຈະໃບອະນຸຍາດ;

ຄັ້ງທີສາມ: ຈະຖືກອາຍັດຜະລິດຕະພັນ, ຖອນໃບອະນຸຍາດ ແລະ ແຈ້ງໃຫ້ຂະແໜງ ອຸດສາຫະກຳ ແລະ ການຄ້າ ດຳເນີນການຖອນໃບອະນຸຍາດດຳເນີນທຸລະກິດຕາມລະບຽບການ.

### ມາດຕາ 41 ມາດຕະການປັບໃໝ (ປັບປຸງ)

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຄັ້ງທີສອງ ຈະຖືກປັບໃໝດັ່ງນີ້:

- ນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານທີ່ບໍ່ໄດ້ຮັບອະນຸຍາດຈາກກົມອາຫານ ແລະ ຢາ, ພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ຖືກປັບໃໝ 3,000,000 ກີບ;
- ນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານທີ່ບໍ່ໄດ້ຮັບການກວດກາ ຈາກເຈົ້າໜ້າທີ່ກວດກາອາຫານ ແລະ ຢາ ປະຈຳດ່ານ ຖືກປັບໃໝ 3,000,000 ກີບ;
- ນຳເຂົ້າ, ສົ່ງອອກ, ນຳເຂົ້າຊົ່ວຄາວ, ສົ່ງອອກຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຜ່ານແດນອາຫານທີ່ບໍ່ບັນລຸມາດຕະຖານຄຸນນະພາບ ແລະ ຄວາມປອດໄພ ຖືກປັບໃໝ 5,000,000 ກີບ;
- ປອມແປງເອກະສານ ຫຼື ສະໜອງເອກະສານປອມ ຖືກປັບໃໝ 3,000,000 ກີບ;
- ນຳເຂົ້າ ອາຫານທີ່ບໍ່ມີສະຫຼາກ ຫຼື ບໍ່ມີສະຕິກເກີ້ເປັນພາສາລາວ ຖືກປັບໃໝ 3,000,000 ກີບ;

- ອາຫານທີ່ມີອາຍຸຕ່ຳກວ່າ 60 ເປີເຊັນ, ໃກ້ຈະໝົດອາຍຸ ຫຼື ໝົດອາຍຸໃນການບໍລິໂພກ ຖືກປັບໃໝ 3,000,000 ກີບ;
- ອາຫານທີ່ມີລັກສະນະຂັດກັບວັດທະທຳ ແລະ ຮີດຄອງປະເພນີຂອງ ສປປ ລາວ ຖືກໃໝ 3,000,000 ກີບ;
- ອາຫານທີ່ມີສ່ວນປະສົມຂອງສານເສບຕິດ ອອກລິດຕໍ່ຈິດປະສາດ ຖືກປັບໃໝ 5,000,000 ກີບ;
- ອາຫານ ທີ່ນອນຢູ່ໃນບັນຊີລາຍການອາຫານຕ້ອງຫ້າມຂອງ ສປປ ລາວ ຫຼື ປະເທດທີສາມ ຖືກປັບໃໝ 3,000,000 ກີບ;
- ຈຳໜ່າຍ ອາຫານສຳລັບສົ່ງຜ່ານ, ນຳເຂົ້າຊົ່ວຄາວ ແລະ ນຳເຂົ້າເພື່ອສົ່ງອອກຕໍ່ ຢູ່ໃນດິນແດນຂອງ ສປປ ລາວ ຖືກປັບໃໝ 3,000,000 ກີບ;
- ອາຫານທີ່ມີຄວາມສ່ຽງສູງ ແລະ ອາຫານໃໝ່ທີ່ບໍ່ໄດ້ຂຶ້ນທະບຽນນຳ ກົມອາຫານ ແລະ ຢາ ຖືກປັບໃໝ 3,000,000 ກີບ;

ການລະເມີດ ຄັ້ງທີສາມ ຈະຖືກປັບໄໝສອງເທົ່າ ຂອງຄັ້ງທີສອງ, ບໍ່ວ່າຈະເປັນການລະເມີດ ຄັ້ງທີໜຶ່ງ, ສອງ ແລະ ສາມ ກໍຕາມ, ຖ້າຫາກກໍ່ໃຫ້ເກີດອັນຕະລາຍຮ້າຍແຮງຕໍ່ສຸຂະພາບ ແລະ ເສດຖະກິດ ຫຼື ແຕະຕ້ອງເຖິງຊີວິດຂອງຜູ້ບໍລິໂພກ, ຜູ້ລະເມີດຈະຖືກດຳເນີນຄະດີຕາມລະບຽບກົດໝາຍ.

**ມາດຕາ 42 ມາດຕະການຕໍ່ພະນັກງານອາຫານ ແລະ ຢາປະຈຳດ່ານ ແລະ ພະນັກງານທີ່ກ່ຽວຂ້ອງ**

ພະນັກງານກວດກາອາຫານ ແລະ ຢາປະຈຳດ່ານ ແລະ ພະນັກງານທີ່ກ່ຽວຂ້ອງທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ໂຈະການເລື່ອນຊັ້ນ ແລະ ຖືກລົງວິໄນຕາມລະບຽບລັດຖະກອນສະບັບນຳໃຊ້ປະຈຸບັນ.

## ໝວດທີ 12
## ຄ່າທຳນຽມ ແລະ ຄ່າບໍລິການ, ການບໍ່ເສຍຄ່າທົດແທນ

**ມາດຕາ 43 ຄ່າທຳນຽມ ແລະ ຄ່າບໍລິການ**

ຜູ້ດຳເນີນທຸລະກິດອາຫານ ຕ້ອງໄດ້ຈ່າຍຄ່າທຳນຽມ ແລະ ບໍລິການທີ່ພົວພັນເຖິງການອອກອະນຸຍາດ, ກວດກາ, ເກັບຕົວຢ່າງ, ກວດສອບ, ການວິໄຈ ແລະ ຢັ້ງຢືນ ອາຫານສົ່ງອອກ, ນຳເຂົ້າ, ສົ່ງອອກຊົ່ວຄາວ, ນຳເຂົ້າຊົ່ວຄາວ, ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ສົ່ງຜ່ານອາຫານ ຕາມລັດຖະບັນຍັດຂອງປະທານປະເທດວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ ຕາມແຕ່ລະໄລຍະ.

**ມາດຕາ 44 ການບໍ່ເສຍຄ່າທົດແທນ**

ກະຊວງສາທາລະນະສຸກ ຈະບໍ່ຮັບຜິດຊອບຕໍ່ການເສຍຫາຍໃດ ທີ່ເກີດຈາກການອາຍັດ ຫຼື ຢຶດອາຫານ, ການສັ່ງຢຸດກິດຈະການທຸລະກິດອາຫານ ຊົ່ວຄາວ ຫຼື ການປິດຢ່າງຖາວອນ, ການດຳເນີນການ ແລະ ການຕັດສິນ ຕາມການກຳນົດໃນກົດໝາຍວ່າດ້ວຍອາຫານ ຫຼື ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 45 ການຮ້ອງຮຽນ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງທີ່ບໍ່ໄດ້ຮັບຄວາມເປັນທໍາຈາກການປະຕິບັດງານ ຂອງເຈົ້າໜ້າທີ່ອາຫານ ແລະ ຢາ, ຜູ້ກ່ຽວມີສິດຍື່ນຄໍາຮ້ອງຮຽນ ທາງບໍລິຫານພ້ອມດ້ວຍເອກະສານ ແລະ ຫຼັກຖານຕ່າງໆທີ່ມີ ເຖິງຂະແໜງການທີ່ກ່ຽວຂ້ອງຕາມແຕ່ລະຂັ້ນ.

## ໝວດທີ 13
## ບົດບັນຍັດສຸດທ້າຍ

**ມາດຕາ 46 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອາຫານ ແລະ ຢາ ເປັນເຈົ້າການໃນການຜັນຂະຫຍາຍ ໂດຍປະສານສົມທົບກັບພະແນກສາທາລະນະສຸກແຂວງ, ນະຄອນຫຼວງ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ປະກົດຜົນເປັນຈິງ.

**ມາດຕາ 47 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ແລະ ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ໃຊ້ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍການ ສົ່ງອອກ, ນໍາເຂົ້າ ແລະ ສົ່ງຜ່ານອາຫານ ສະບັບເລກທີ 1166/ສທ, ລົງວັນທີ 21 ມິຖຸນາ 2018 ແລະ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງການຜະລິດ, ສົ່ງອອກ-ນໍາເຂົ້າອາຫານ ທີ່ປອດໄພ ສະບັບເລກທີ 856/ກຊສ, ລົງວັນທີ 12 ພຶດສະພາ 2006.

ລັດຖະມົນຕີ

ປອ.ດຣ. ບຸນແຝງ ພູມມະໄລສິດ